ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 022 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 29 FEB 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ຢູ່ໃນນະຄອນຫລວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ **server** ຈໍານວນ 04 ໜ່ວຍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງບໍລິສັດ, ຫ້າງຮ້ານ ຕົວແທນຈໍາໜ່າຍອຸປະກອນໄອທີຊາບວ່າ ທຄຕລ ມີຄວາມຕ້ອງການຈັດຊື້ອຸປະກອນໄອທີ **server ຈໍານວນ 04 ໜ່ວຍ** ເພື່ອມາຮັບໃຊ້ເຂົ້າໃນລະບົບວຽກງານໄອທີ ດັ່ງມີລາຍການຂ້າງລຸ່ມນີ້:

| ລໍາດັບ | ອຸປະກອນ | ເງື່ອນໄຂກ່ຽວກັບສະເປັກເຄື່ອງ | ຈໍານວນ |
|---|---|---|---|
| 1 | Intel server | 1. CPU: Intel® Xeon® Platinum 8280 2.7GHz, 28Core (x2 Socket)<br>2. RAM: 1 TB<br>3. Internal Storage: 480 GB SSD SATA x6 (RAID 6)<br>4. NIC: 10 Gbps SFP+ x8 port (2 port / card)<br>5. FC: 16 Gbps x4 port (2 port / card) | 4 |

**I. ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

**1. ຊອງເອກະສານປະກອບມີ:**

- ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈໍາໜ່າຍອຸປະກອນໄອທີ ຫຼື ມີໃບຢັ້ງຢືນເຄື່ອງໄອທີ ລະບຸປີ, ປະເທດທີ່ຜະລິດອຸປະກອນໄອທີ(SERIES) ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ, ມີປະສົບການຜົນງານ 03 ປີ ຂຶ້ນໄປ ແລະ ມີວິຊາການບໍລິການຫຼັງການຂາຍ.
- ກໍານົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີຈະປິດຮັບວັນທີ 13/03/2020 ເວລາ 16:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

**2. ຊອງໃບສະເໜີລາຄາ** (ຕ້ອງເປັນສະກຸນເງິນກີບລວມອາກອນ).

- ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າທັງໝົດໃຫ້ຄົບຖ້ວນ.
- ໃນວັນທີ 20/03/2020 ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈໍາໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C, ສ່ວນເວລາແມ່ນຈະໄດ້ແຈ້ງຕາມພາຍຫຼັງ.

II. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ທີ່ຊະນະການປະມູນ, ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍຫລັງໄດ້ຮັບເຄື່ອງ ແລະ ຕິດຕັ້ງເຄື່ອງສຳເລັດ.

ງວດທີ 2: ຊຳລະ 10% ຂອງມູນຄ່າທັງໝົດພາຍຫຼັງຄົບກຳນົດຄ້ຳປະກັນ (ໄລຍະ 06 ເດືອນ) ນັບຕັ້ງແຕ່ວັນທີມອບຮັບເຄື່ອງ.

❖ **<u>ໝາຍເຫດ:</u>**

1. ຜູ້ແຂ່ງຂັນປະມູນຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ຫຼື ໜັງສືຄ້ຳປະກັນທີ່ອອກໂດຍທະນາຄານ ມາໃຫ້ ທຄຕລ ໃນມື້ທີ່ນຳຊອງສະເໜີລາຄາມາຍື່ນ. ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນຄ້ຳປະກັນດັ່ງກ່າວຄືນ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາຕາມກຳນົດ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ຜູ້ຈັດຊື້-ຈັດຈ້າງໃນມູນຄ່າເທົ່າກັບ 2% ຂອງມູນຄ່າທີ່ສະເໜີປະມູນ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນສັນຍາ 10% ຫຼື ຕະຫຼອດອາຍຸຂອງສັນຍາ ຫຼື ສະມາດປະກອບໜັງສືຄ້ຳປະກັນຈາກທະນາຄານ ຫຼື ສະຖາບັນການເງິນໃຫ້ ທຄຕລ ຈົນກວ່າຈະໝົດໄລຍະເວລາຄ້ຳປະກັນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ